ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ອົງການກວດກາແຫ່ງລັດ

ເລກທີ 331/ອກຫລ

ນະຄອນຫຼວງວຽງຈັນ, ວັນທີ 03 ຕຸລາ 2023

# ຄຳແນະນຳ
# ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ)

- ອີງຕາມ ກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022;

ພາຍຫຼັງ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ອອກມະຕິຮັບຮອງກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ເລກທີ 66/ສພຊ, ລົງວັນທີ 29 ທັນວາ 2022, ປະທານປະເທດອອກລັດຖະດຳລັດປະກາດໃຊ້ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ເລກທີ 021/ປປທ, ລົງວັນທີ 10 ກຸມພາ 2023, ເຊິ່ງກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ເລກທີ 25/ສພຊ, ລົງວັນທີ 29 ທັນວາ 2022 ປະກອບດ້ວຍ 9 ພາກ, 9 ໝວດ, 81 ມາດຕາ ໄດ້ກຳນົດຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວກວດກາລັດ ເວົ້າລວມແມ່ນຄົບຖ້ວນ ແລະ ຈະແຈ້ງ ແຕ່ເນື້ອໃນທີ່ໄດ້ກຳນົດໃນບາງມາດຕາຂອງກົດ ໝາຍສະບັບນີ້ ບໍ່ສາມາດລະບຸລະອຽດໄດ້ຢ່າງຄົບຖ້ວນ ຈຶ່ງໄດ້ມີບົດແນະນຳການຈັດຕັ້ງປະຕິບັດເພີ່ມເຕີມ.

**ປະທານ ອົງການກວດກາແຫ່ງລັດ ອອກຄຳແນະນຳ:**

## I. ຈຸດປະສົງ

1. ເພື່ອຜັນຂະຫຍາຍເນື້ອໃນ ຂອງກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ບາງມາດຕາທີ່ເຫັນວ່າມີຄວາມຈຳເປັນຕ້ອງໄດ້ອະທິບາຍໃຫ້ລະອຽດ, ຈະແຈ້ງ, ເຂົ້າໃຈງ່າຍ ແລະ ສາມາດຈັດຕັ້ງປະຕິບັດໄດ້;

2. ສ້າງຄວາມເຂົ້າໃຈເປັນເອກະພາບ ແລະ ເລິກເຊິ່ງ ຂອງຄະນະພັກ, ອົງການປົກຄອງແຕ່ລະຂັ້ນ ຕໍ່ກັບເນື້ອໃນຂອງກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ) ເພື່ອນຳພາ-ຊີ້ນຳອົງການກວດກາລັດຂັ້ນຕົນຈັດຕັ້ງ ແລະ ເຄື່ອນໄຫວວຽກງານກວດກາລັດ ໃຫ້ມີຄວາມເປັນເອກະພາບ ແລະ ມີການຫັນປ່ຽນຢ່າງຕັ້ງໜ້າ, ແຂງແຮງ ແລະ ເລິກເຊິ່ງ;

3. ເພື່ອໃຫ້ອົງການກວດກາລັດ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພະນັກງານລັດວິສາຫະກິດ ທີ່ປະຕິບັດໜ້າທີ່ກວດກາລັດຢູ່ແຕ່ລະຂັ້ນ ໄດ້ເຂົ້າໃຈຖືກຕ້ອງ, ຄົບຖ້ວນ, ເລິກເຊິ່ງ, ມີຄວາມເປັນເອກະພາບ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ.

## II. ແນະນຳເນື້ອໃນ ບາງມາດຕາເພີ່ມເຕີມ ຂອງກົດໝາຍ ວ່າດ້ວຍການກວດກາລັດ.

1. ມາດຕາ 2 ການກວດກາລັດ

1.1. ການກວດກາການຈັດຕັ້ງປະຕິບັດນະໂຍບາຍ ໝາຍເຖິງ ການກວດກາບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ຜັນຂະຫຍາຍ ແລະ ປະຕິບັດນະໂຍບາຍ ຂອງລັດວາງອອກໃນແຕ່ລະໄລຍະ ເພື່ອຄຸ້ມຄອງການບໍລິຫານລັດ, ຄຸ້ມຄອງການຈັດຕັ້ງ ແລະ ບຸກຄົນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ);

1.2. ການກວດກາການຈັດຕັ້ງປະຕິບັດກົດໝາຍ ໝາຍເຖິງ ການກວດກາຕໍ່ເປົ້າໝາຍຕ່າງໆ ກ່ຽວກັບການ

ປະຕິບັດກົດໝາຍທີ່ຢູ່ໃນຄວາມຮັບຜິດຊອບຂອງຂະແໜງການ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ໃນເມື່ອກວດກາພົບເຫັນເປົ້າໝາຍມີການລະເມີດ ກໍ່ຕ້ອງພິຈາລະນາ, ຕົກລົງກ່ຽວກັບການລະເມີດນັ້ນພ້ອມທັງມີມາດຕະການແກ້ໄຂຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີການລະເມີດນັ້ນ, ຕາມກົດໝາຍ.

**2. ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານກວດກາລັດ**

ເນື້ອໃນທີ່ວ່າ: ລັດຊຸກຍູ້, ສົ່ງເສີມແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພົນລະເມືອງ ເຂົ້າຮ່ວມໃນວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ໝາຍຄວາມວ່າ:

2.1. ອົງການກວດກາລັດແຕ່ລະຂັ້ນ ຕ້ອງຖືສຳຄັນສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ປຸກລະດົມບັນດາອົງການຈັດຕັ້ງດັ່ງກ່າວ ຕິດຕາມ ກຳສະພາບ ແລະ ສະໜອງຂໍ້ມູນ, ຫຼັກຖານໃຫ້ການຈັດຕັ້ງ ຫຼື ພະນັກງານທີ່ເຮັດໜ້າທີ່ກວດກາຂອງລັດ ກ່ຽວກັບການກະທຳຜິດຂອງການຈັດຕັ້ງ ແລະ ເຈົ້າໜ້າທີ່ລັດ;

2.2. ເຂົ້າຮ່ວມກອງປະຊຸມວຽກງານກວດກາປະຈຳປີ ຕາມການເຊີນຂອງອົງການກວດກາລັດ ແຕ່ລະຂັ້ນເພື່ອລາຍງານຜົນການຕິດຕາມ, ກວດກາ ແລະ ການແກ້ໄຂຜົນຂອງການກວດກາທີ່ໄດ້ປະຕິບັດຜ່ານມາ;

2.3. ເຂົ້າຮ່ວມຕິດຕາມ, ກວດກາໂດຍກົງ ຕາມການສະເໜີ ຫຼື ຕົກລົງ ຂອງອົງການກວດກາລັດ ທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ;

2.4. ສະເໜີເຂົ້າພົບ ແລະ ລາຍງານເປັນລາຍລັກອັກສອນ ຫຼື ປາກເປົ່າ ຕໍ່ອົງການກວດກາລັດ ທີ່ກ່ຽວຂ້ອງ;

2.5. ສົ່ງຄຳສະເໜີ ຫຼື ຄຳຮ້ອງຟ້ອງກ່ຽວກັບການປະຕິບັດໜ້າທີ່ຂອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພະນັກງານວິສາຫະກິດ, ນາຍບ້ານ, ຮອງນາຍບ້ານ ແລະ ຜູ້ໄດ້ຮັບມອບສິດຈາກທາງການ ທີ່ປະຕິບັດໜ້າທີ່ຢູ່ອົງການຈັດຕັ້ງຂອງລັດແຕ່ຂັ້ນສູນກາງ ລົງຮອດຂັ້ນທ້ອງຖິ່ນ ແລະ ວິສາຫະກິດທີ່ດຳເນີນທຸລະກິດຢູ່ພາຍໃນ ແລະ ຕ່າງປະເທດລວມທັງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຂອງຕ່າງປະເທດ ທີ່ເຄື່ອນໄຫວ ແລະ ດຳເນີນທຸລະກິດ ຢູ່ ສປປ ລາວ ທີ່ມີການລະເມີດລະບຽບດ້ານບໍລິຫານ ຫຼື ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ, ການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ໃຫ້ອົງການກວດກາລັດທີ່ກ່ຽວຂ້ອງໂດຍກົງ ຫຼື ຜ່ານທາງ **WWW.sia.gov.la** ຫຼື ຜ່ານທາງໄປສະນີ, ຕູ້ຮັບຈົດໝາຍ ທີ່ການຈັດຕັ້ງກວດກາລັດ ຫຼື ການຈັດຕັ້ງລັດໄດ້ຈັດວາງໄວ້ແຕ່ລະບ່ອນ;

2.6. ລາຍງານຜ່ານໂທລະສັບສາຍດ່ວນ ຕາມກະຊວງ-ອົງການທີ່ກ່ຽວຂ້ອງໄດ້ກຳນົດໄວ້ ແລະ ດ້ວຍຮູບການອື່ນ;

2.7. ສຳລັບສື່ມວນຊົນ ນອກຈາກການເຂົ້າຮ່ວມຕິດຕາມ, ໂຄສະນາເຜີຍແຜ່ນະໂຍບາຍ, ກົດໝາຍ, ລະບຽບການຂອງລັດ ກ່ຽວກັບວຽກງານກວດກາ, ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງແລ້ວ ຍັງຕ້ອງເຂົ້າຮ່ວມເກັບກຳຂ່າວ ແລະ ອອກຂ່າວການເຄື່ອນໄຫວຕ່າງໆ ຂອງອົງການກວດກາລັດ ເປັນຕົ້ນການເກັບກຳຂ່າວ ແລະ ອອກຂ່າວກອງປະຊຸມສະຫຼຸບວຽກງານກວດກາ, ການຈັດສຳມະນາຕ່າງໆ, ການເປີດເຜີຍຜົນຂອງການກວດກາ, ຄຳພິພາກສາຂອງສານທີ່ໃຊ້ໄດ້ຢ່າງເດັດຂາດກ່ຽວກັບຄະດີສໍ້ລາດບັງຫຼວງ ແລະ ການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມການຕົກລົງເຫັນດີຂອງຂັ້ນເທິງ ດ້ວຍຮູບການຕ່າງໆ ຕາມກົດໝາຍໄດ້ກຳນົດ.

**3. ມາດຕາ 6 ຄວາມຮັບຜິດຊອບ ກ່ຽວກັບວຽກງານກວດກາ**

**ວັກທີ 2:** ພະນັກງານ-ລັດຖະກອນກວດກາລັດ ໝາຍເຖິງ ພະນັກງານ-ລັດຖະກອນກວດກາລັດ ທີ່ສັງກັດຢູ່ໃນອົງການກວດກາລັດແຕ່ລະຂັ້ນ ລວມທັງພະນັກງານ-ລັດຖະກອນຈາກການຈັດຕັ້ງອື່ນທີ່ກ່ຽວຂ້ອງ ຊຶ່ງໄດ້ຮັບການແຕ່ງ ຕັ້ງເຂົ້າໃນຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເພື່ອດຳເນີນການກວດກາ ຕໍ່ເປົ້າໝາຍກວດກາຢູ່ສູນກາງ ແລະ ທ້ອງຖິ່ນ.

**4. ມາດຕາ 11 ບ່ອນອີງໃນການອອກຂໍ້ຕົກລົງກວດກາລັດ.**

**ຂໍ້ທີ 2** ເນື້ອໃນທີ່ວ່າ: ການອອກຂໍ້ຕົກລົງກວດກາ ໂດຍອີງໃສ່ມະຕິຂອງກອງປະຊຸມສະພາແຫ່ງຊາດ, ມະຕິຂອງຄະນະປະຈຳສະພາແຫ່ງຊາດ ຫຼື ມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ, ມະຕິຂອງຄະນະປະຈຳສະພາປະ

ຊາຊົນຂັ້ນແຂວງ ໝາຍເຖິງກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງແຕ່ລະຄັ້ງໄດ້ພິຈາລະນາກ່ຽວກັບບົດລາຍງາຍຂອງລັດຖະບານ, ບົດລາຍງານຜົນຂອງການກວດສອບ, ການປະຕິບັດໜ້າທີ່ ແລະ ຄວາມຮັບຜິດຊອບຂອງການຈັດຕັ້ງ ແລະ ບຸກຄົນ ທີ່ເຫັນວ່າບໍ່ທັນແຈ້ງ, ມີປະກົດການລະເມີດກົດໝາຍ, ສໍ້ລາດບັງຫຼວງ ໄດ້ອອກມະຕິ ເພື່ອໃຫ້ອົງການກວດກາແຫ່ງລັດ ຫຼື ກົມກວດກາລັດຂັ້ນກະຊວງ ຫຼື ອົງການກວດກາລັດຂັ້ນແຂວງສືບຕໍ່ເກັບກຳຂໍ້ມູນ, ກວດກາ, ດຳເນີນການສືບສວນ-ສອບສວນ ລົງເລິກແຕ່ລະບັນຫາ ແລ້ວສະຫຼຸບລາຍງານຜົນການກວດກາ ຕາມຂັ້ນຕອນດັ່ງນີ້:

- ອົງການກວດກາແຫ່ງລັດ ລາຍງານຕໍ່ປະທານປະເທດ, ແລ້ວຈຶ່ງລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈຳສະພາແຫ່ງຊາດ.

- ກົມກວດກາກະຊວງ-ອົງການ ລາຍງານຕໍ່ຄະນະນຳກະຊວງ-ອົງການກ່ອນ ແລ້ວຈຶ່ງລາຍງານຕໍ່ ອົງການກວດກາແຫ່ງລັດ.

- ອົງການກວດກາລັດຂັ້ນແຂວງລາຍງານຕໍ່ຄະນະນຳ ອົງການປົກຄອງ ຂັ້ນແຂວງກ່ອນ ແລ້ວຈຶ່ງລາຍງານຕໍ່ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈຳສະພາປະຊາຊົນຂັ້ນແຂວງ.

**ຂໍ້ທີ 4 ເນື້ອໃນທີ່ວ່າ:** ການອອກຂໍ້ຕົກລົງກວດກາລັດ ໂດຍອີງໃສ່ຜົນການກວດສອບ ໝາຍເຖິງການຈັດຕັ້ງປະຕິບັດຕົວຈິງຕາມບົດບັນທຶກການປະສານງານລະຫວ່າງອົງການກວດກາແຫ່ງລັດ ກັບອົງການກວດສອບແຫ່ງລັດ ຫຼື ກົມກວດກາລັດຂອງບັນດາກະຊວງ-ອົງການ ກັບກົມກວດສອບອົງການຈັດຕັ້ງລັດ ຂອງອົງການກວດສອບແຫ່ງລັດ ແລະ ອົງການກວດ ກາລັດຂັ້ນແຂວງກັບອົງການກວດສອບປະຈຳພາກ ທີ່ໄດ້ເຊັນບົດບັນທຶກຮ່ວມກັນແຕ່ລະໄລຍະ ໂດຍອີງໃສ່ອົງການກວດສອບແຫ່ງລັດ ຫຼື ອົງການກວດສອບປະຈຳພາກ ໄດ້ສະໜອງຂໍ້ມູນ, ຫຼັກຖານທີ່ບໍ່ທັນແຈ້ງ ແລະ ຊັດທັນເຈນ ເປັນຕົ້ນ ບັນຫາທີ່ພົວພັນ ກັບຄວາມຮັບຜິດຊອບຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເພື່ອສະເໜີໃຫ້ອົງການກວດກາແຫ່ງລັດ ຫຼື ກົມກວດກາລັດຂອງບັນດາກະຊວງ-ອົງການ ແລະ ອົງການກວດກາລັດຂັ້ນແຂວງ ດຳເນີນການກວດກາ ແລະ ສະເໜີວິທີແກ້ໄຂຕາມກົດໝາຍ.

**5. ມາດຕາ 14 ເນື້ອໃນການກວດກາລັດ**

**ຂໍ້ທີ 3 ເນື້ອໃນທີ່ວ່າ:** ການກວດກາ ຕາມຜົນການກວດສອບ ຕາມຄຳສະເໜີ ຂອງອົງການກວດສອບແຫ່ງລັດ ໃນກໍລະນີຈຳເປັນ, ຮີບດ່ວນ; ຕາມມະຕິກອງປະຊຸມສະພາແຫ່ງຊາດ ຫຼື ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ມະຕິກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ໃນການປະຕິບັດຕົວຈິງຈະໄດ້ດຳເນີນ ດັ່ງນີ້:

- ເມື່ອໄດ້ຮັບການສະເໜີ ໃຫ້ດຳເນີນການກວດກາ ຈາກອົງການກວດສອບແຫ່ງລັດ ຫຼື ຕາມມະຕິກອງປະຊຸມສະພາແຫ່ງຊາດ ຫຼື ມະຕິຂອງຄະນະປະຈຳສະພາແຫ່ງຊາດ, ອົງການກວດກາແຫ່ງລັດ ຕ້ອງໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອອອກຂໍ້ຕົກລົງແຕ່ງຕັ້ງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ແລະ ສ້າງແຜນການດຳເນີນການກວດກາໂດຍກົງ. ໃນກໍລະນີ ມີການພົວພັນເຖິງຄວາມຮັບຜິດຊອບຂອງຂັ້ນກະຊວງ ແລະ ຂັ້ນແຂວງ ແມ່ນມອບໃຫ້ອົງການກວດກາລັດ ຂັ້ນກະຊວງ ແລະ ອົງການກວດກາລັດຂັ້ນແຂວງເປັນຜູ້ດຳເນີນການກວດກາໂດຍກົງ. ພາຍຫຼັງກວດກາສຳເລັດແລ້ວ ແມ່ນໃຫ້ລາຍງານຕໍ່ຂັ້ນກະຊວງ ແລະ ຂັ້ນແຂວງຮັບຊາບ ພ້ອມກັນນັ້ນ ກໍ່ຕ້ອງສົ່ງບົດລາຍງານຜົນຂອງການກວດກາແຕ່ລະເປົ້າໝາຍ ໃຫ້ອົງການກວດກາແຫ່ງລັດ ເພື່ອຊາບ ແລະ ມີທິດຊີ້ນຳແກ້ໄຂ.

- ເມື່ອໄດ້ຮັບການສະເໜີໃຫ້ດຳເນີນການກວດກາ ຈາກອົງການກວດສອບປະຈຳພາກ ຫຼື ຕາມມະຕິຂອງກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ມະຕິຂອງຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແມ່ນມອບໃຫ້ອົງການກວດກາລັດຂັ້ນແຂວງ ເປັນຜູ້ດຳເນີນການກວດກາໂດຍກົງ. ການດຳເນີນການກວດກາຕົວຈິງ ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງອົງການກວດກາແຫ່ງລັດ ເລກທີ 36/ອກລ, ລົງວັນທີ 5 ກຸມພາ 2018 ກ່ຽວກັບການກວດກາ ຕາມຜົນການກວດສອບ ຫຼື ຄຳແນະນຳອື່ນທີ່ກ່ຽວຂ້ອງ.

**6. ມາດຕາ 20 ການສະຫຼຸບຜົນການກວດກາ**

ຂໍ້ທີ 3: ສົ່ງຮ່າງບົດສະຫຼຸບຜົນການກວດກາໃຫ້ຫົວໜ້າການຈັດຕັ້ງຂັ້ນເທິງ ແລະ ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ເພື່ອພິຈາລະນາ ພາຍໃນເວລາ ຫ້າວັນລັດຖະການ ນັບແຕ່ວັນໄດ້ຮັບຮ່າງບົດສະຫຼຸບຜົນການກວດກາ ເປັນຕົ້ນໄປ ໝາຍເຖິງ ຮ່າງບົດສະຫຼຸບຜົນການກວດກາ ຕ້ອງເປັນເອກະພາບພາຍໃນຄະນະກວດກາ ຫຼື ຄະນະກວດກາສະເພາະກິດກ່ອນສົ່ງໃຫ້ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ແລະ ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ເພື່ອມີຄຳເຫັນ ແລະ ຮັບຮອງເອົາຜົນການກວດກາ ຕາມຄະນະກວດກາ ຫຼື ຄະນະກວດກາສະເພາະກິດໄດ້ສະຫຼຸບ, ຕີລາຄາ; ວິທີຈັດຕັ້ງປະຕິບັດ ຫົວໜ້າການຈັດຕັ້ງ ຂອງເປົ້າໝາຍຖືກກວດກາຕ້ອງຮີບຮ້ອນເປີດກອງປະຊຸມໂດຍມີຫົວໜ້າຂະແໜງການກ່ຽວຂ້ອງ ທີ່ແມ່ນເປົ້າໝາຍກວດກາ ແລະ ການເຂົ້າຮ່ວມເປັນປະທານກອງປະຊຸມຂອງຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ເພື່ອຄົ້ນຄວ້າເນື້ອໃນຂອງຮ່າງບົດສະຫຼຸບຜົນການກວດກາ. ບາງກໍລະນີກໍ່ເຊີນຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເຂົ້າຮ່ວມກອງປະຊຸມນຳເລີຍ ເພື່ອແລກປ່ຽນຄຳເຫັນຮ່ວມກັນ ຕໍ່ກັບບັນຫາທີ່ບໍ່ທັນແຈ້ງ, ບໍ່ທັນຊັດເຈນ ເພື່ອຄວາມເປັນເອກະພາບ ແລະ ພ້ອມກັນລົງລາຍເຊັນຢັ້ງຢືນໃສ່ບົດສະຫຼຸບຜົນການກວດກາ ພາຍໃນ ຫ້າວັນລັດຖະການ ນັບແຕ່ໄດ້ຮັບຮ່າງບົດສະຫຼຸບຜົນການກວດກາ.

ກອງປະຊຸມຜ່ານຮ່າງບົດສະຫຼຸບຜົນການກວດກາ ພາຍໃນຄະນະນຳອົງການຈັດຕັ້ງຂອງເປົ້າໝາຍຖືກກວດກາແຕ່ລະຄັ້ງຕ້ອງເຮັດບົດບັນທຶກ, ຜູ້ເຂົ້າຮ່ວມກອງປະຊຸມພ້ອມກັນລົງລາຍເຊັນ ເພື່ອເປັນຫຼັກຖານຢັ້ງຢືນ. ສ່ວນຜູ້ເຊັນບົດສະຫຼຸບຜົນການກວດກາປະຕິບັດຄື:

**ຕົວຢ່າງ: 1.** ດຳເນີນການກວດກາຢູ່ພະແນກໃດໜຶ່ງຂອງກົມວິຊາການໃດໜຶ່ງ ບົດສະຫຼຸບຜົນການກວດກາຕ້ອງແມ່ນຫົວໜ້າກົມ ທີ່ພະແນກນັ້ນຂຶ້ນກັບເປັນຜູ້ລົງລາຍເຊັນ; ກໍລະນີ ດຳເນີນການກວດກາກົມວິຊາການໃດໜຶ່ງຂອງກະຊວງ-ອົງການໃດໜຶ່ງ ບົດສະຫຼຸບຜົນການກວດກາ ແມ່ນລັດຖະມົນຕີ ຂອງກະຊວງ-ອົງການນັ້ນ ເປັນຜູ້ລົງລາຍເຊັນ ແລະ ຫົວໜ້າຄະນະກວດກາ ຫຼື ຫົວໜ້າຄະນະກວດກາສະເພາະກິດ ທີ່ໄປດຳເນີນການກວດກາລົງລາຍເຊັນເພື່ອຢັ້ງຢືນຄວາມເປັນເອກະພາບ ແລະ ຖືກຕ້ອງ.

**ຕົວຢ່າງ: 2.** ດຳເນີນການກວດກາຢູ່ຂະແໜງວິຊາສະເພາະໃດໜຶ່ງ ຂອງພະແນກການ ຂັ້ນແຂວງໃດໜຶ່ງບົດສະຫຼຸບຜົນການກວດກາ ຕ້ອງແມ່ນຫົວໜ້າພະແນກການ ທີ່ຂະແໜງການນັ້ນຂຶ້ນກັບເປັນຜູ້ລົງລາຍເຊັນ; ໃນກໍລະນີດຳເນີນການກວດກາພະແນກການ ຂັ້ນແຂວງໃດໜຶ່ງ ບົດສະຫຼຸບຜົນການກວດກາຕ້ອງແມ່ນເຈົ້າແຂວງ ຫຼື ຮອງເຈົ້າແຂວງຕາມການມອບໝາຍຂອງເຈົ້າແຂວງ ເປັນຜູ້ລົງລາຍເຊັນ ແລະ ຫົວໜ້າຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ທີ່ໄປດຳເນີນການກວດກາ ລົງລາຍເຊັນ ເພື່ອຢັ້ງຢືນຄວາມເປັນເອກະພາບ ແລະ ຖືກຕ້ອງ.

**7. ມາດຕາ 21 ການລາຍງານຜົນການກວດກາ**

ເນື້ອໃນທີ່ວ່າ: ພາຍຫຼັງສຳເລັດການກວດກາ ຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ຕ້ອງສົ່ງບົດສະຫຼຸບ ແລະ ລາຍງານຜົນການກວດກາຕໍ່ຜູ້ຕົກລົງໃຫ້ກວດກາ ເພື່ອພິຈາລະນາ ແລະ ຕົກລົງແກ້ໄຂ; ໝາຍຄວາມວ່າ: ພາຍຫຼັງຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ດຳເນີນການກວດກາສຳເລັດ ແລະ ມີບົດສະຫຼຸບຜົນການກວດກາ ໂດຍການເຊັນຢັ້ງຢືນຈາກຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ຄະນະກວດກາ ຫຼື ຄະນະກວດກາສະເພາະກິດຕ້ອງສ້າງເປັນບົດລາຍງານຜົນການກວດກາໂດຍໄວ (ການສ້າງບົດລາຍງານຜົນກວດກາ ແມ່ນນອນໃນກຳນົດເວລາດຳເນີນການກວດກາ) ໂດຍສັງລວມເອົາເນື້ອໃນທີ່ເປັນບັນຫາຕົ້ນຕໍ ຂອງບົດສະຫຼຸບຜົນການກວດກາ, ມີການຕີລາຄາທຽບໃສ່ກົດໝາຍ, ລະບຽບການຂອງລັດທີ່ກ່ຽວຂ້ອງ ແລະ ສະເໜີວິທີການ, ມາດຕະການແກ້ໄຂຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການຂອງລັດ. ບົດລາຍງານຜົນການກວດກາຕ້ອງໄດ້ຄັດຕິດບົດສະຫຼຸບຜົນການກວດກາພ້ອມທັງເອກະສານຂໍ້ມູນ, ຫຼັກຖານທີ່ເກັບກຳ, ທ້ອນໂຮມໄດ້ຖ້າເຫັນວ່າມີຄວາມຈຳເປັນ. ກໍລະນີ ຂໍ້ມູນ, ຫຼັກຖານນັ້ນເປັນບັນຊີ ຫຼື ມີຕົວເລກເປັນຈຳນວນຫຼາຍ ຕ້ອງໄດ້ສ້າງເປັນຂໍ້ມູນສະຖິຕິ ເພື່ອສົ່ງໃຫ້ຜູ້ອອກຂໍ້ຕົກລົງກວດກາ ແລະ ພາກສ່ວນກ່ຽວຂ້ອງທີ່ເຂົ້າຮ່ວມກອງປະຊຸມ ຄົ້ນຄວ້າພິຈາລະນາຜົນການກວດກາ ແລະ ວິທີການ, ມາດຕະການແກ້ໄຂຜົນການກວດກາໃຫ້ສຳເລັດພາຍໃນເວລາທີ່ກົດໝາຍໄດ້ກຳນົດໄວ້.

**8. ພາກທີ II ໝວດທີ 3 ການເຄື່ອນໄຫວກອດກາຂອງຄະນະກວດກາ ແລະ ຄະນະກວດກາສະເພາະກິດ** ໃຫ້ປະຕິບັດຕາມລະບຽບການ ຂອງອົງການກວດກາແຫ່ງລັດ ສະບັບເລກທີ 170/ອກຫລ, ລົງວັນທີ 21 ກໍລະກົດ 2023 ກ່ຽວກັບການເຄື່ອນໄຫວດໍາເນີນການກວດກາຂອງຄະນະກວດກາ ແລະ ຄະນະກວດກາສະເພາະກິດ.

**9. ມາດຕາ 28 ການພິຈາລະນາຜົນການກວດກາ**

ການພິຈາລະນາຜົນການກວດກາ ແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ອອກຕົກລົງໃຫ້ກວດກາໝາຍຄວາມວ່າ: ພາຍຫຼັງຜູ້ອອກຂໍ້ຕົກລົງໃຫ້ກວດກາໄດ້ຮັບບົດສະຫຼຸບ ແລະ ບົດລາຍງານຜົນການກວດກາຈາກຄະນະກວດກາ ຫຼື ຄະນະກວດກາສະເພາະກິດຕ້ອງປະຕິບັດຄື:

- ກໍລະນີ ຫົວໜ້າອົງການລັດ ເປັນຜູ້ຕົກລົງໃຫ້ກວດກາ ຫົວໜ້າອົງການລັດນັ້ນ ຕ້ອງເປັນເຈົ້າການຈັດກອງປະຊຸມ ພິຈາລະນາຜົນການກວດກາ ດ້ວຍການເຂົ້າຮ່ວມຂອງຄະນະນໍາ ທີ່ກ່ຽວຂ້ອງຂອງຂັ້ນຕົນ ເພື່ອຄວາມເປັນເອກະພາບພາຍໃນຄະນະຮັບຮອງເອົາຜົນການພິຈາລະນາ ແລະ ຕົກລົງແກ້ໄຂຜົນການກວດກາ;

- ກໍລະນີ ປະທານອົງການກວດກາລັດ ເປັນຜູ້ຕົກລົງໃຫ້ກວດກາ ປະທານອົງການກວດກາລັດນັ້ນຕ້ອງເປັນເຈົ້າການຈັດກອງປະຊຸມ ພິຈາລະນາຜົນການກວດກາ ດ້ວຍການເຂົ້າຮ່ວມຂອງບັນດາຮອງປະທານ ເພື່ອຄວາມເປັນເອກະພາບນໍາກັນ ແລະ ຮັບຮອງເອົາຜົນການພິຈາລະນາ ແລະ ຕົກລົງແກ້ໄຂຜົນການກວດກາ;

ການປະຕິບັດ 2 ກໍລະນີ ຂ້າງເທິງນັ້ນ ໂດຍການເຂົ້າຮ່ວມຂອງຫົວໜ້າ ແລະ ຮອງຫົວໜ້າຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເພື່ອລາຍງານ ແລະ ຊີ້ແຈງບັນຫາຕ່າງໆ ກ່ຽວກັບເນື້ອໃນຜົນການກວດກາ ທີ່ກອງປະຊຸມໃຫ້ຄວາມສົນໃຈ. ຖ້າຈໍາເປັນ ຫຼື ຕິດພັນກັບຫຼາຍພາກສ່ວນ ກໍໃຫ້ວິຊາການໃນຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງເຂົ້າຮ່ວມນໍາ, ການຄົ້ນຄວ້າພິຈາລະນາຜົນການກວດການັ້ນ ຕ້ອງໃຫ້ສໍາເລັດພາຍໃນກໍານົດເວລາສູງສຸດບໍ່ເກີນ ຊາວວັນ ນັບແຕ່ວັນທີ່ໄດ້ຮັບບົດສະຫຼຸບ ແລະ ບົດລາຍງານຜົນການກວດກາ ເປັນຕົ້ນໄປ. ເມື່ອຄົ້ນຄວ້າພິຈາລະນາເປັນເອກະພາບແລ້ວ ຜູ້ຕົກລົງໃຫ້ກວດກາ ຕ້ອງອອກຂໍ້ຕົກລົງແກ້ໄຂຜົນການກວດກາ ແລະ ແຈ້ງຜົນການພິຈາລະນາແກ້ໄຂນັ້ນ ໃຫ້ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ແລະ ຫົວໜ້າການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ແລະ ຜູ້ຖືກກວດກາ ຮັບຊາບພາຍໃນເວລາ ເຈັດວັນລັດຖະການ ເພື່ອກະກຽມ ແລະ ຈັດຕັ້ງປະຕິບັດຜົນການກວດກາ.

ກໍລະນີ ສິດອໍານາດແກ້ໄຂແມ່ນຄວາມຮັບຜິດຊອບຂອງການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ຫຼື ອົງການຈັດຕັ້ງອື່ນທີ່ກ່ຽວຂ້ອງ ແມ່ນສະເໜີໃຫ້ພາກສ່ວນດັ່ງກ່າວ ດໍາເນີນການແກ້ໄຂຕາມຄວາມຮັບຜິດຊອບ ແລະ ສິດຄຸ້ມຄອງຂອງຂັ້ນຕົນ, ພາຍຫຼັງພິຈາລະນາຮັບຮອງເອົາຜົນການກວດກາແລ້ວ ອອກຂໍ້ຕົກລົງ, ຄໍາສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາ ໃຫ້ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ແລະ ຜູ້ຖືກກວດກາ ຮັບຊາບພາຍໃນກໍານົດເວລາ ເຈັດວັນ ລັດຖະການ ເພື່ອກະກຽມຈັດຕັ້ງປະຕິບັດ ແລະ ລາຍງານ ກ່ຽວກັບການຕົກລົງ, ຄໍາສັ່ງ ຫຼື ແຈ້ງການ ໃຫ້ຜູ້ອອກຂໍ້ຕົກລົງກວດກາຮັບຊາບ ແລະ ຕິດຕາມ.

**10. ມາດຕາ 29 ການແກ້ໄຂຜົນການກວດກາ.**

ການແກ້ໄຂຜົນການກວດກາ ແມ່ນໜ້າທີ່ ແລະ ຄວາມຮັບຜິດຊອບ ຂອງຫົວໜ້າການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດກາ ແລະ ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ. ເພື່ອຍົກສູງຄວາມຮັບຜິດຊອບຂອງການຈັດຕັ້ງ ແລະ ຂອງຜູ້ເປັນຫົວໜ້າ ຕໍ່ການຈັດຕັ້ງປະຕິບັດຜົນການກວດກາດ້ວຍຄວາມເປັນເຈົ້າການ, ເຂັ້ມງວດ, ທັນເວລາ ແລະ ຖືກຕ້ອງ ຕາມການຕົກລົງແກ້ໄຂຜົນການກວດກາປະຕິບັດດັ່ງນີ້:

ພາຍຫຼັງໄດ້ຮັບຂໍ້ຕົກລົງ, ຄໍາສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາແລ້ວ ຫົວໜ້າການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດກາ ຕ້ອງຊີ້ນໍາຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ຈັດຕັ້ງປະຕິບັດຄື: ຕ້ອງຮີບຮ້ອນແຕ່ງຕັ້ງຄະນະຮັບຜິດຊອບ ແລະ ຊີ້ນໍາແກ້ໄຂຜົນການກວດກາ, ຄະນະຮັບຜິດຊອບແກ້ໄຂຜົນການກວດກາຕ້ອງຄົ້ນຄວ້າຢ່າງເລິກເຊິ່ງ ຕໍ່ກັບເນື້ອໃນຂໍ້ຕົກລົງ, ຄໍາສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາ, ສ້າງແຜນການດໍາເນີນການແກ້ໄຂຕົວຈິງເປັນແຕ່ລະຂັ້ນຕອນ, ຕ້ອງແກ້ໄຂໃຫ້ສໍາເລັດພາຍໃນກໍານົດເວລາ ສາມສິບວັນ ນັບ

ແຕ່ວັນໄດ້ຮັບຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາເປັນຕົ້ນໄປ ແລະ ລາຍງານຜົນການແກ້ໄຂເປັນລາຍລັກອັກສອນ ໃຫ້ຜູ້ອອກຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາຊາບພາຍໃນ ສິບຫ້າວັນ.

ໃນກໍລະນີ ການຈັດຕັ້ງປະຕິບັດຜົນການກວດກາ ບໍ່ສຳເລັດພາຍໃນກຳນົດເວລາ ທີ່ໄດ້ກຳນົດໄວ້ຂ້າງເທິງ ຍ້ອນສາເຫດໃດໜຶ່ງ ຫົວໜ້າການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດກາ ກໍຕ້ອງລາຍງານໃຫ້ຜູ້ອອກຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາຊາບ ແລະ ເພື່ອມີທິດຊີ້ນຳ.

ໃນກໍລະນີ ຜູ້ເປັນຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ຫາກແກ້ໄຂຜົນການກວດກາ ບໍ່ຖືກຕ້ອງຕາມການຕົກລົງ ຫຼື ບໍ່ແກ້ໄຂຜົນການກວດກາ ຜູ້ເປັນຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາຈະຖືກກວດກາ ແລະ ພິຈາລະນາລົງວິໄນ ໂດຍອີງຕາມຜົນການກວດກາ ຕາມກໍລະນີເບົາ ຫຼື ໜັກ ເພື່ອກຳນົດຮູບການລົງວິໄນແຕ່ຂັ້ນກ່າວເຕືອນ ໄປເຖິງຂັ້ນດຳເນີນຄະດີ ຕາມກົດໝາຍ.

ວິທີການ, ຂັ້ນຕອນ ການຈັດຕັ້ງປະຕິບັດການລົງວິໄນ ແລະ ການດຳເນີນຄະດີຕໍ່ຫົວໜ້າການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດກາ ແມ່ນປະຕິບັດຕາມກົດໝາຍວ່າດ້ວຍພະນັກງານ-ລັດຖະກອນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ.

**11. ມາດຕາ 30 ການຕິດຕາມ, ຊຸກຍູ້, ກວດກາ ການແກ້ໄຂຜົນການກວດກາ**

ການຕິດຕາມ, ຊຸກຍູ້ ແລະ ກວດກາການແກ້ໄຂຜົນການກວດກາຂອງອົງການລັດຂັ້ນໃດ ແມ່ນຄວາມຮັບຜິດຊອບຂອງອົງການກວດກາລັດຂັ້ນນັ້ນ ເປັນຜູ້ຕິດຕາມ, ຊຸກຍູ້, ກວດກາໂດຍກົງ ຊຶ່ງປະກອບດ້ວຍອົງການກວດກາລັດມີດັ່ງນີ້:

11.1. ອົງການກວດກາແຫ່ງລັດ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ຕິດຕາມ, ຊຸກຍູ້, ກວດກາການແກ້ໄຂຜົນການກວດກາ ໃນກໍລະນີ ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ຫຼື ຫົວໜ້າການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ແມ່ນນາຍົກລັດຖະມົນຕີ ຫຼື ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ຫຼື ຮອງລັດຖະມົນຕີ, ຫົວໜ້າອົງການ ຫຼື ຮອງຫົວໜ້າອົງການ, ເຈົ້າແຂວງ ຫຼື ຮອງເຈົ້າແຂວງ, ເຈົ້ານະຄອນຫຼວງ ຫຼື ຮອງເຈົ້ານະຄອນຫຼວງ;

11.2. ອົງການກວດກາລັດ ຂັ້ນກະຊວງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ຕິດຕາມ, ຊຸກຍູ້, ກວດກາການແກ້ໄຂຜົນການກວດກາ ໃນກໍລະນີ ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ຫຼື ຫົວໜ້າການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ແມ່ນຫົວໜ້າກົມ ຫຼື ຮອງຫົວໜ້າກົມ, ຫົວໜ້າພະແນກ ຫຼື ຮອງຫົວໜ້າພະແນກ;

11.3. ອົງການກວດກາລັດ ຂັ້ນແຂວງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ຕິດຕາມ, ຊຸກຍູ້, ກວດກາ ການແກ້ໄຂຜົນການກວດກາ ໃນກໍລະນີ ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ຫຼື ຫົວໜ້າການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ແມ່ນຫົວໜ້າພະແນກການ ຫຼື ຮອງຫົວໜ້າພະແນກການ, ເຈົ້າເມືອງ ຫຼື ຮອງເຈົ້າເມືອງ, ຫົວໜ້າເທດສະບານ ຫຼື ຮອງຫົວໜ້າເທດສະບານ, ເຈົ້ານະຄອນ ຫຼື ຮອງເຈົ້ານະຄອນ, ຫົວໜ້າຂະແໜງການ ຫຼື ຮອງຫົວໜ້າຂະແໜງການ;

11.4. ອົງການກວດກາລັດ ພະແນກການຂັ້ນແຂວງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ຕິດຕາມ, ຊຸກຍູ້, ກວດກາ ການແກ້ໄຂຜົນການກວດກາ ຕາມຂອບເຂດຄວາມຮັບຜິດຊອບຂັ້ນຕົນ;

11.5. ອົງການກວດກາລັດຂັ້ນເມືອງ ມີໜ້າທີ່ ແລະ ຄວາມຮັບຜິດຊອບ ຕິດຕາມ, ຊຸກຍູ້, ກວດກາການແກ້ໄຂຜົນການກວດກາ ຕາມຂອບເຂດຄວາມຮັບຜິດຊອບຂັ້ນຕົນ.

ການເຄື່ອນໄຫວປະຕິບັດໜ້າທີ່ ຂອງອົງການກວດກາລັດແຕ່ລະຂັ້ນ ໃນການຕິດຕາມ, ຊຸກຍູ້, ກວດກາ ການແກ້ໄຂຜົນການກວດກາ ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ການຈັດຕັ້ງຂອງອົງການກວດກາລັດແຕ່ລະຂັ້ນ ທີ່ຮັບຜິດຊອບ ຕິດຕາມ, ຊຸກຍູ້, ກວດກາການແກ້ໄຂຜົນການກວດກາ ຕ້ອງເກັບກຳ, ທ້ອນໂຮມເອົາສຳນວນເອກະສານ ການກວດກາທັງໝົດ ຈາກຄະນະກວດກາ ຫຼື ຄະນະກວດກາສະເພາະກິດ ເພື່ອສັງລວມ ແລະ ຂຶ້ນສະຖິຕິ ກ່ຽວກັບການແກ້ໄຂຜົນການກວດກາແຕ່ລະເປົ້າໝາຍ, ສ້າງແຜນການດຳເນີນການຕິດຕາມ ການແກ້ໄຂຜົນການກວດກາເປັນແຕ່ລະເປົ້າໝາຍ ເພື່ອສະເໜີ ຜູ້ອອກຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາອະນຸມັດໃຫ້ດຳເນີນການຕິດຕາມ ແລະ ລາຍງານຜົນການຕິດຕາມໃຫ້ຜູ້ອອກຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາ ພາຍໃນກຳນົດເວລາ ສີ່ສິບຫ້າວັນ ນັບແຕ່ມື້ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ຫຼື ຫົວໜ້າການຈັດຕັ້ງ ຂອງເປົ້າໝາຍຖືກກວດກາໄດ້ຮັບຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາເປັນຕົ້ນໄປ.

2. ຜ່ານການຕິດຕາມ ຫາກເຫັນວ່າ ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ແລະ ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ແກ້ໄຂບໍ່ຖືກຕ້ອງ ຫຼື ບໍ່ສຳເລັດ ຫຼື ບໍ່ທັນໄດ້ແກ້ໄຂຈະດ້ວຍເຫດຜົນໃດກໍຕາມ, ຄະນະຮັບຜິດຊອບຕິດຕາມ, ຊຸກຍູ້, ການແກ້ໄຂຜົນການກວດກາ ສະເໜີໃຫ້ຜູ້ອອກຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການເພື່ອສືບຕໍ່ຊຸກຍູ້ ການແກ້ໄຂຜົນການກວດກາ ແລະ ລາຍງານຜົນການຊຸກຍູ້ ພາຍໃນກຳນົດເວລາ ຊາວຫ້າວັນ ນັບແຕ່ມີຂໍ້ຕົກລົງໃຫ້ດຳເນີນການຊຸກຍູ້ການແກ້ໄຂຜົນການກວດກາ.

3. ຜ່ານການຊຸກຍູ້ ຫາກເຫັນວ່າ ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ແລະ ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ແກ້ໄຂບໍ່ຖືກຕ້ອງ ຫຼື ບໍ່ສຳເລັດ ຫຼື ບໍ່ແກ້ໄຂຜົນການກວດກາ, ຄະນະຮັບຜິດຊອບຕິດຕາມ, ຊຸກຍູ້, ກວດກາ ການແກ້ໄຂຜົນການກວດກາ ສະເໜີໃຫ້ຜູ້ອອກຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການອອກຂໍ້ຕົກລົງດຳເນີນການກວດກາ ການຈັດຕັ້ງປະຕິບັດແກ້ໄຂຜົນການກວດກາ ພາຍໃນກຳນົດເວລາ ຫ້າ ຫາ ສິບ ວັນລັດຖະການ ຂຶ້ນກັບເນື້ອໃນຂອງການກວດກາ. ໂດຍອີງໃສ່ຜົນຂອງການກວດກາດັ່ງກ່າວ ຜູ້ອອກຂໍ້ຕົກລົງໃຫ້ດຳເນີນການກວດກາພິຈາລະນາຕົກລົງວິໄນ ຕໍ່ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ ແລະ ຫົວໜ້າການຈັດຕັ້ງຂອງເປົ້າໝາຍຖືກກວດກາ ຕາມກໍລະນີເບົາ ຫຼື ໜັກ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 29 ຂອງກົດໝາຍ ວ່າດ້ວຍການກວດກາລັດ (ສະບັບປັບປຸງ).

ກໍລະນີ ການພິຈາລະນາຕົກລົງວິໄນ ຫາກເກີນສິດ ຂອງຜູ້ອອກຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາ, ສິດພິຈາລະນາຕົກລົງວິໄນນັ້ນ ຕ້ອງແມ່ນຂັ້ນເທິງທີ່ມີສິດຄຸ້ມຄອງຫົວໜ້າການຈັດຕັ້ງຂັ້ນເທິງຂອງເປົ້າໝາຍຖືກກວດກາ ແລະ ຫົວໜ້າການຈັດຕັ້ງ ເປົ້າໝາຍຖືກກວດກາ ເປັນຜູ້ພິຈາລະນາ.

ວິທີການ, ຂັ້ນຕອນການຕິດຕາມ, ຊຸກຍູ້, ກວດກາການແກ້ໄຂຜົນການກວດກາ ລະອຽດແມ່ນໃຫ້ປະຕິບັດຕາມຂໍ້ຕົກລົງຂອງຄະນະກວດກາສູນກາງພັກ ກ່ຽວກັບການຕິດຕາມ, ກວດກາການຈັດຕັ້ງປະຕິບັດຜົນການກວດກາ ຫຼື ຂໍ້ຕົກລົງອື່ນທີ່ກ່ຽວຂ້ອງ.

**12. ມາດຕາ 31 ການເປີດເຜີຍຜົນການກວດກາ**

ການເປີດເຜີຍຜົນການກວດກາທີ່ຖືກຮັບຮອງ ແລະ ໄດ້ຮັບອະນຸຍາດ ຈາກຜູ້ຕົກລົງໃຫ້ກວດກາ ສາມາດເປີດເຜີຍດ້ວຍຮູບການໃດໜຶ່ງຕາມຄວາມເໝາະສົມ ດັ່ງນີ້:

12.1. ແຈ້ງຂ່າວໃຫ້ການຈັດຕັ້ງທີ່ກ່ຽວຂ້ອງເປັນລາຍລັກອັກສອນ ໝາຍຄວາມວ່າ: ນອກຈາກແຈ້ງໃຫ້ຫົວໜ້າການຈັດຕັ້ງຂັ້ນເທິງ ຂອງເປົ້າໝາຍຖືກກວດກາ, ຫົວໜ້າການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ແລະ ເປົ້າໝາຍຖືກກວດກາແລ້ວ ຕ້ອງແຈ້ງໃຫ້ການຈັດຕັ້ງອື່ນທີ່ພົວພັນກັບເນື້ອໃນຂໍ້ຕົກລົງ, ຄຳສັ່ງ ຫຼື ແຈ້ງການ ກ່ຽວກັບການແກ້ໄຂຜົນການກວດກາ ແລະ ອົງການກວດກາລັດ ຂັ້ນເທິງຂອງອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ ເພື່ອຕິດຕາມ ແລະ ຊີ້ນຳ;

12.2. ແຈ້ງຜົນການກວດກາໃຫ້ທົ່ວສັງຄົມ ຕາມຄວາມເໝາະສົມ ໝາຍຄວາມວ່າ: ແຈ້ງອອກຜ່ານສື່ສິ່ງ

ພິມເຊັ່ນ: ໜັງສືພິມ, ວາລະສານ, ໃບຂ່າວສານ, ຈົດໝາຍເຫດ ແລະ ສື່ເອເລັກໂຕຣນິກ ເປັນຕົ້ນ: ວິທະຍຸ, ໂທລະພາບ, ໂທລະໂຄ່ງ ແລະ ສື່ແບບໃໝ່ ຫຼື ລາຍການອິນເຕີເນັດແບບຕ່າງໆ;

13.3. ແຈ້ງຜົນການກວດກາດ້ວຍຮູບການອື່ນ ໝາຍຄວາມວ່າ: ຈັດການຖະແຫຼງຂ່າວ, ຈັດກອງປະຊຸມແຈ້ງຜົນຂອງການກວດກາ, ຕິດໄວ້ກະດານຂ່າວ ຢູ່ສໍານັກງານຂອງອົງການຈັດຕັ້ງ ຂອງເປົ້າໝາຍຖືກກວດກາ.

**14. ມາດຕາ 35 ທີ່ຕັ້ງຂອງອົງການກວດກາລັດ ແຕ່ລະຂັ້ນ** ເປັນມາດຕາໃໝ່ ຊຶ່ງໄດ້ກໍານົດທີ່ຕັ້ງຂອງອົງການກວດກາລັດແຕ່ລະຂັ້ນຄື: ອົງການກວດກາແຫ່ງລັດ; ອົງການກວດກາລັດຂັ້ນກະຊວງ; ອົງການກວດກາລັດຂັ້ນແຂວງ; ອົງການກວດກາລັດຂອງພະແນກການຂັ້ນແຂວງ ແລະ ອົງການກວດກາລັດຂັ້ນເມືອງ.

ວັກສຸດທ້າຍ: ໃນກໍລະນີຈໍາເປັນ ກົມວິຊາການ ຫຼື ອົງການລັດທຽບເທົ່າກົມ ທີ່ຂຶ້ນກັບກະຊວງ-ອົງການ ແລະ ຫ້ອງການຂັ້ນເມືອງ ອາດສ້າງຕັ້ງກົງຈັກກວດກາລັດຂອງຕົນຂຶ້ນກໍໄດ້ ໃຫ້ຈັດຕັ້ງປະຕິບັດ ດັ່ງນີ້:

14.1. ກົມວິຊາການ ຫຼື ອົງການລັດທຽບເທົ່າກົມທີ່ຂຶ້ນກັບຂັ້ນກະຊວງ.

- ກົມໃຫຍ່, ກົມ, ຫ້ອງການ ແລະ ສະຖາບັນອື່ນ ທີ່ຂຶ້ນກັບກະຊວງ-ອົງການ ທີ່ມີຄວາມຈໍາເປັນສ້າງຕັ້ງພະແນກກວດກາລັດ ຫຼື ຫ້ອງການກວດກາລັດຂຶ້ນ ແມ່ນການຈັດຕັ້ງນັ້ນ ເປັນຜູ້ຄົ້ນຄວ້າແລ້ວນໍາສະເໜີຕໍ່ລັດຖະມົນຕີ ຫຼື ຫົວໜ້າອົງການຂອງຕົນພິຈາລະນາ ເພື່ອສະເໜີຕໍ່ການຈັດຕັ້ງທີ່ກ່ຽວຂ້ອງຄົ້ນຄວ້າພິຈາລະນາ.

- ໃນກໍລະນີ ກົມໃຫຍ່, ກົມ, ຫ້ອງການ ແລະ ສະຖາບັນອື່ນ ທີ່ໄດ້ສ້າງຕັ້ງພະແນກກວດກາລັດ ຫຼື ຫ້ອງການກວດກາລັດຂຶ້ນໃນໄລຍະຜ່ານມາແລ້ວ ກໍໃຫ້ຮັກສາໄວ້ຄືເກົ່າ.

ພາລະບົດບາດ, ສິດ ແລະ ໜ້າທີ່ ພະແນກກວດກາລັດ ຫຼື ຫ້ອງການກວດກາລັດນັ້ນ ແມ່ນໃຫ້ປະຕິບັດຕາມກົດໝາຍສະບັບນີ້ໂດຍມອບໃຫ້ກົມກວດກາລັດກະຊວງ-ອົງການນັ້ນ ເປັນຜູ້ຄົ້ນຄວ້າແລ້ວສະເໜີຕໍ່ລັດຖະມົນຕີເປັນຜູ້ຕົກລົງ ແລະ ທັງເປັນຜູ້ຮັບຜິດຊອບໃນການຕິດຕາມ, ກວດກາໂດຍກົງ ຕໍ່ກົມໃຫຍ່, ກົມ, ຫ້ອງການ ແລະ ສະຖາບັນອື່ນໆ ທີ່ຂຶ້ນກັບກະຊວງ-ອົງການຕົນ ທີ່ບໍ່ໄດ້ສ້າງຕັ້ງພະແນກກວດກາລັດ ຫຼື ຫ້ອງການກວດກາລັດຂຶ້ນ.

14.2. ອົງການກວດກາລັດ ຂອງພະແນກການຂັ້ນແຂວງ

ພະແນກການຂັ້ນແຂວງ ທີ່ໄດ້ສ້າງຕັ້ງຂະແໜງກວດກາລັດມາແລ້ວ ຕາມກົດໝາຍວ່າດ້ວຍການກວດກາລັດ ສະບັບເລກທີ 41/ສພຊ, ລົງວັນທີ 16 ພະຈິກ 2017 ໃຫ້ສືບຕໍ່ຮັກສາກົງຈັກໄວ້, ພະແນກການໃດທີ່ໄດ້ໂຮມເຂົ້າກັບຂະແໜງອື່ນແລ້ວ ໃຫ້ແຕ່ງຕັ້ງກໍານົດຜູ້ທີ່ເຮັດວຽກງານກວດກາໃຫ້ຈະແຈ້ງ. ຜ່ານການປະຕິບັດຕົວຈິງຫາກເຫັນວ່າ ຄວນສ້າງຕັ້ງຂະແໜງກວດກາເປັນຂະແໜງສະເພາະ ແມ່ນການນໍາຂອງພະແນກການດັ່ງກ່າວ ຄົ້ນຄວ້າສົມທົບກັບ ອົງການກວດກາລັດ ຂັ້ນແຂວງ, ພະແນກພາຍໃນແຂວງ ສະເໜີກະຊວງ-ອົງການ ຕາມສາຍຕັ້ງຂອງຕົນຕົກລົງ.

14.3. ຫ້ອງການຂັ້ນເມືອງ

- ການສ້າງຕັ້ງໜ່ວຍງານກວດກາລັດ ຂອງບັນດາຫ້ອງການຂັ້ນເມືອງ ທີ່ມີຄວາມຈໍາເປັນສ້າງຕັ້ງຂຶ້ນໃໝ່ນັ້ນ ແມ່ນມອບໃຫ້ຫ້ອງການຂັ້ນເມືອງນັ້ນ ເປັນຜູ້ຄົ້ນຄວ້າແລ້ວນໍາສະເໜີ ຕໍ່ພະແນກການຕາມສາຍຕັ້ງຂັ້ນແຂວງ, ອົງການກວດກາລັດ ຂັ້ນເມືອງ ແລະ ຫ້ອງການພາຍໃນ ຂັ້ນເມືອງ ພິຈາລະນາ ເພື່ອສະເໜີຕໍ່ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ອະນຸມັດສ້າງຕັ້ງຕາມກົດໝາຍ.

- ໃນກໍລະນີ ຫ້ອງການໃດໄດ້ສ້າງຕັ້ງຂຶ້ນແລ້ວ ແມ່ນໃຫ້ຮັກສາໄວ້ຄືເກົ່າ.

ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງໜ່ວຍງານກວດກາລັດ ຂອງບັນດາຫ້ອງການ ຂັ້ນເມືອງ ແມ່ນໃຫ້ປະຕິບັດຕາມກົດໝາຍສະບັບນີ້ ໂດຍມອບໃຫ້ຂະແໜງກວດກາລັດ ຕາມສາຍຕັ້ງ ຂັ້ນແຂວງນັ້ນ ເປັນຜູ້ຄົ້ນຄວ້າ ແລ້ວສະເໜີຕໍ່ຫົວໜ້າພະແນກການ ຂັ້ນແຂວງເປັນຜູ້ຕົກລົງ ແລະ ທັງເປັນຜູ້ຮັບຜິດຊອບໃນການຕິດຕາມ, ກວດກາໂດຍກົງ ຕໍ່ຫ້ອງການອ້ອມຂ້າງເມືອງ, ເທດສະບານ, ນະຄອນ ຂຶ້ນກັບສາຍຕັ້ງຂອງຕົນທີ່ບໍ່ໄດ້ສ້າງຕັ້ງໜ່ວຍງານກວດກາລັດຂຶ້ນ.

ກົງຈັກການຈັດຕັ້ງຂອງກົມກວດກາລັດ ຂັ້ນກະຊວງ, ອົງການກວດກາລັດ ຂັ້ນແຂວງ, ຂັ້ນເມືອງ, ພະແນກການຂັ້ນແຂວງ, ກົມວິຊາການ ຫຼື ອົງການລັດທຽບເທົ່າກົມ ທີ່ຂຶ້ນກັບຂັ້ນກະຊວງ ແລະ ໜ່ວຍງານກວດກາລັດຂອງບັນ ດາຫ້ອງການຂັ້ນເມືອງຈະມີບົດແນະນຳລະອຽດ ຂອງຄະນະກວດກາສູນກາງພັກ.

15. ສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ, ດຳເນີນການສືບສວນ-ສອບສວນ ຄະດີສໍ້ລາດບັງຫຼວງ, ການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂໍ້ທີ 13, ມາດຕາ 42 ຂໍ້ທີ 11, ມາດຕາ 43 ຂໍ້ທີ 11, ມາຕາ 44 ຂໍ້ທີ 10 ແລະ ມາດຕາ 45 ຂໍ້ທີ 10 ສ່ວນລາຍລະອຽດ ການເຄື່ອນໄຫວວຽກງານຕ້ານການສໍ້ລາດບັງຫຼວງ, ດຳເນີນການສືບສວນ-ສອບສວນ ຄະດີສໍ້າດບັງຫຼວງ, ການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ແມ່ນໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ແລະ ຄຳແນະນຳຂອງອົງການກວດກາແຫ່ງລັດ ເລກທີ 27/ອກລ, ລົງວັນທີ 30 ມັງກອນ 2018 ກ່ຽວກັບການດຳເນີນຄະດີສໍ້ລາດບັງຫຼວງ, ການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ.

16. ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນທີ່ໄດ້ກຳນົດໄວ້ໃນມາດຕາ 41 ຂໍ້ທີ 12, ມາດຕາ 42 ຂໍ້ທີ 10, ມາດຕາ 43 ຂໍ້ທີ 10, ມາຕາ 44 ຂໍ້ທີ 9 ແລະ ມາດຕາ 45 ຂໍ້ທີ 9 ສ່ວນການເຄື່ອນໄຫວວຽກງານພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ແມ່ນໃຫ້ປະຕິບັດ ຕາມກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ແລະ ຂໍ້ຕົກລົງ ຂອງຄະນະກວດກາສູນກາງພັກ ເລກທີ 398/ຄກສພ, ລົງວັນທີ 26 ກັນຍາ 2019 ວ່າດ້ວຍການຄົ້ນຄ້ວາພິຈາລະນາແກ້ໄຂຄຳຮ້ອງຟ້ອງ, ຮ້ອງທຸກ ແລະ ຄຳສະເໜີ.

**17. ມາດຕາ 75 ງົບປະມານ**

ວັກທີ 3 ໄດ້ກຳນົດວ່າ: ສຳລັບງົບປະມານ ເພື່ອນຳໃຊ້ໃນການກວດກາຕາມມະຕິກອງປະຊຸມຂອງສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ, ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ຂອງອົງການລັດ, ຕາມແຜນການກວດສອບ ແລະ ການກວດກາແບບກະທັນຫັນນັ້ນ ໃຫ້ສ້າງແຜນຄາດຄະເນງົບປະມານສະເໜີລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນຫຼວງ ເພື່ອພິຈາລະນາ. ເຊິ່ງການສ້າງແຜນງົບປະມານດັ່ງກ່າວຕ້ອງຄາດຄະເນລາຍຈ່າຍຈາກການເຄື່ອນໄຫວກວດກາຕົວຈິງໃນປີທີ່ຜ່ານມາ, ບົນພື້ນຖານການສ້າງແຜນລາຍຈ່າຍງົບປະມານປະຈຳແຕ່ລະປີ ໃຫ້ອີງໃສ່ປຶ້ມຄູ່ມືການບັນຊີຂອງອົງການຈັດຕັ້ງລັດ ທີ່ກະຊວງການເງິນໄດ້ວາງອອກແຕ່ລະໄລຍະ ໃຫ້ບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ເພີ່ມງົບປະມານໃຫ້ອົງການກວດກາລັດແຕ່ລະຂັ້ນ ເພື່ອໃຫ້ສາມາດປະຕິບັດວຽກງານກວດກາໃຫ້ໄດ້ຮັບຜົນສຳເລັດ ຕາມທີ່ໄດ້ກຳນົດໄວ້ ໃນມະຕິກອງປະຊຸມຂອງສະພາແຫ່ງຊາດ ເລກທີ 074/ສພຊ, ລົງວັນທີ 17 ພະຈິກ 2017 ມາດຕາ 53.

## III. ການຈັດຕັ້ງປະຕິບັດ

1. ຄະນະນຳກະຊວງ-ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ອົງການກວດກາລັດແຕ່ລະຂັ້ນ ຕ້ອງຄົ້ນຄວ້າເຊື່ອມຊຶມ, ກຳແໜ້ນ, ຈັດຕັ້ງເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ປະຊາຊົນ, ພົນລະເມືອງເວົ້າລວມ, ເວົ້າສະເພາະ ພະນັກງານກວດກາລັດແຕ່ລະຂັ້ນຮັບຮູ້-ເຂົ້າໃຈ ແລະ ຈັດຕັ້ງປະຕິບັດຄຳແນະນຳ ສະບັບນີ້ຢ່າງເຂັ້ມງວດ.

2. ຜ່ານການຈັດຕັ້ງປະຕິບັດຄຳແນະນຳ ສະບັບນີ້ ຖ້າມີຄວາມຫຍຸ້ງຍາກ ໃຫ້ລາຍງານອົງການກວດກາແຫ່ງລັດ ເພື່ອຊີ້ນຳ, ປັບປຸງ ແລະ ແກ້ໄຂໃຫ້ທັນເວລາ.

ປະທານ ອົງການກວດກາແຫ່ງລັດ

ອົງການກວດກາແຫ່ງລັດ
ປະທານ

ຄຳພັນ ພົມມະທັດ